ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 1:
## Overview of Lao Traditional Literature

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 1:** ວັນນະຄະດີພື້ນເມືອງໂດຍສັງເຂບ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

ເວລາ: 90 ນາທີ

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ຄວາມໝາຍ ແລະຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວ<br>- ການກຳເນີດ ແລະການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ<br>- ຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວ<br>- ການກຳເນີດຂອງວັນນະຄະດີພື້ນເມືອງລາວ<br>- ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ</td><td>ຄຳຖາມຫຼັກ (Questions):<br>1) ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ ເປັນແນວໃດ?<br>2) ຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວ ເປັນແນວໃດ?<br>3) ການກຳເນີດຂອງວັນນະຄະດີພື້ນເມືອງລາວ ເປັນແນວໃດ?<br>4) ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ ເປັນແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງພື້ນຖານການກຳເນີດ ແລະການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງ ການກຳເນີດ ແລະການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
<tr><td colspan="2">ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)</td></tr>
</table>

- **ສື່ການສອນມີ:**
  ປື້ມຕໍາລາວິຊາວັນນະຄະດີພື້ນເມືອງລາວ, ປື້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກໍາ.
- **ກິດຈະກໍາການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ເນື່ອງຈາກເປັນຊົ່ວໂມງທໍາອິດຍັງບໍ່ມີບົດຮຽນເກົ່າຄູນໍາພາເຂົ້າສູ່ບົດໃໝ່ເລີຍ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

## ບົດທີ 1
## ວັນນະຄະດີພື້ນເມືອງໂດຍສັງເຂບ

**1. ຄວາມໝາຍ ແລະຄວາມສໍາຄັນຂອງວັນນະຄະດີພື້ນເມືອງລາວ**

**1.1 ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ** ( 15 ນາທີ)

**<u>ກິດຈະກໍາ 1:</u>**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປື້ມຕໍາລາ
  1) ວັນນະຄະດີພື້ນເມືອງລາວແມ່ນຫຍັງ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (10 ນາທີ)

ວັນນະຄະດີພື້ນເມືອງ ແມ່ນຮູບການປະດິດແຕ່ງດ້ວຍປາກເປົ່າຂອງປະຊາຊົນຜູ້ອອກແຮງງານ. ນັບແຕ່ສະໄໝຍັງບໍ່ທັນມີຕົວໜັງສື, ປູ່ຍ່າຕານາຍຂອງພວກເຮົາໄດ້ປະດິດແຕ່ງວັນນະຄະດີພື້ນເມືອງລາວຂຶ້ນ ເຊິ່ງເປັນຫຼັກຖານພິຍານກ່ຽວກັບປະຫວັດການຕ່າງໆຂອງສັງຄົມສະໄໝບູຮານ.

ວັນນະຄະດີພື້ນເມືອງເປັນພາກສ່ວນໜຶ່ງທີ່ມີຄວາມໝາຍ ແລະບົດບາດສໍາຄັນໃນວັນນະຄະດີແຫ່ງຊາດ. ບໍ່ວ່າຊາດໃດໃນໂລກ ກໍລ້ວນແຕ່ມີວັນນະຄະດີພື້ນເມືອງຂອງຊາດນັ້ນ, ເພື່ອຈົດຈໍາຄວາມຮູ້, ບົດຮຽນໃນການເພີ່ມພູຜະລິດຜົນ, ໃນການຕໍ່ສູ້ທໍາມະຊາດ ແລະສັງຄົມ.

ວັນນະຄະດີພື້ນເມືອງເປັນພາກສ່ວນໜຶ່ງທີ່ສໍາຄັນໃນວັນນະຄະດີແຫ່ງຊາດ. ນັບແຕ່ສະໄໝຍັງບໍ່ທັນມີຕົວອັກສອນ, ປູ່ຍ່າຕານາຍຂອງພວກເຮົາກໍໄດ້ປະດິດແຕ່ງວັນນະຄະດີພື້ນເມືອງທີ່ເລົ່າດ້ວຍປາກເປົ່າສືບຕໍ່ກັນມາແລ້ວ. ຢູ່ໃນລາວ, ບໍ່ວ່າເຜົ່າໃດກໍລ້ວນແຕ່ມີວັນນະຄະດີພື້ນເມືອງຂອງຕົນເອງ. ວັນນະຄະດີພື້ນເມືອງປະກອບດ້ວຍ ເທບນິຍາຍ, ນິທານ, ພື້ນສືບ, ນິທານສັດ, ນິທານຊວນຫົວ, ຄໍາໂສກ, ຄໍາໂອມ, ຄໍາທວາຍ, ຄໍາສຸພາສິດ, ກອນພະຫຍາ ແລະອື່ນໆ. ວັນນະຄະດີພື້ນເມືອງປະເພດຕ່າງໆ ດັ່ງກ່າວໄດ້ສະທ້ອນໃຫ້ເຫັນເຖິງບົດຮຽນໃນການດໍາລົງຊີວິດ, ຄວາມຮູ້ວັດທະນະທໍາ, ການສ້າງສາ ແລະການຕໍ່ສູ້ຂອງປະຊາຊົນລາວເຮົາ ນັບຕັ້ງແຕ່ສະໄໝປະຖົມບູຮານເປັນຕົ້ນມາ.

ປັດຈຸບັນນີ້, ວັນນະຄະດີພື້ເມືອງເຊິ່ງເປັນມໍລະດົກແຫ່ງວັດທະນະທຳຂອງຊາດນັບມື້ໄດ້ຮັບການປົກປັກຮັກສາ ແລະ ສົ່ງເສີມ (ອ່ອນແກ້ວ ນວນນະວົງ ແລະຄະນະ, 2008).

ວັນນະຄະດີພື້ນເມືອງຂອງລາວເຮົາ ເວົ້າລວມແລ້ວແມ່ນເລື່ອງເລົ່າພື້ນເມືອງຕ່າງໆທີ່ປະຊາຊົນຜູ້ອອກແຮງງານປະດິດແຕ່ງ ແລະເລົ່າປາກຕໍ່ປາກສືບຕໍ່ກັນມາແຕ່ບູຮານນະການຈົນເຖິງທຸກວັນນີ້. ບົດເລື່ອງສ່ວນຫຼາຍໄດ້ເລົ່າ ຫຼື ພັນລະນາເຫດການ ແລະການເຄື່ອນໄຫວຕ່າງໆຂອງຕົວລະຄອນ, ໂດຍບໍ່ເຄີຍໄດ້ພັນລະນາເຂົ້າເລິກທາງແນວຄິດຈິດຕະສາດຂອງຕົວລະຄອນ, ແຕ່ກໍມີຢູ່ບາງບົ້ນ, ບາງຕອນໃນບົດເລື່ອງທີ່ແນວຄິດຈິດຕະສາດຂອງຕົວລະຄອນໄດ້ສະແດງອອກຢ່າງຈະແຈ້ງ ແລະເລິກເຊິ່ງສົມຄວນ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

ວັນນະຄະດີພື້ນເມືອງ ແມ່ນພາກສ່ວນໜຶ່ງ ໃນການປະດິດແຕ່ງສິລະຂອງປະຊາຊົນຜູ້ອອກແຮງງານ ແລະກໍແມ່ນພາກສ່ວນໜຶ່ງຂອງຮູບຖານສະຕິສັງຄົມ (ກຽງແກ້ວ ນວນນະວົງ ແລະຄະນະ, 2002).

**1.2 ຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວ** (15 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ວັນນະຄະດີພື້ນເມືອງລາວມີຄວາມສຳຄັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ວັນນະຄະດີພື້ນເມືອງລາວ ມີບົດບາດສຳຄັນຢ່າງຍິ່ງຕໍ່ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີຂຽນໃນສະໄໝກ່ອນກໍຄືສະໄໝປັດຈຸບັນ. ເມື່ອເຖິງໄລຍະຕົ້ນຂອງສະໄໝລ້ານຊ້າງ, ສາສະໜາພຸດໄດ້ຄ່ອຍແຜ່ຂະຫຍາຍເຂົ້າມາລາວເຮົາ ວັນນະຄະດີຂຽນໄດ້ກຳເນີດຂຶ້ນ ແລະແຜ່ຂະຫຍາຍສືບຕໍ່ມາ. ໃນເບື້ອງຕົ້ນບົດເລື່ອງໜຶ່ງ, ຄຳກອນໜຶ່ງຕ້ອງແມ່ນບຸກຄົນໃດບຸກຄົນໜຶ່ງແຕ່ງຂຶ້ນ ຕໍ່ມາຄົນທັງຫຼາຍຈິ່ງນຳເອົາບົດເລື່ອງ ແລະຄຳກອນເຫຼົ່ານັ້ນໄປເຜີຍແຜ່ຕໍ່ພ້ອມທັງໄດ້ດັດແປງແຕ່ງຈື່ມໃຫ້ມັນດີຂຶ້ນກວ່າເກົ່າ. ດ້ວຍເຫດນັ້ນ, ບົດເລື່ອງ, ບົດຮ້ອງ, ບົດລຳ, ຄຳກາບຄຳກອນທີ່ມີຈັງຫວະທຳນອງອັນມ່ວນຊື່ນ ແລະມີຊີວິດຊີວາເຫຼົ່ານັ້ນ ລ້ວນແຕ່ແມ່ນໝາກຜົນແຫ່ງການຄົ້ນຄວ້າ, ຄົ້ນຄິດປະດິດແຕ່ງລວມໝູ່ຂອງປະຊາຊົນ. ປະຊາຊົນບັນດາຊົນເຜົ່າລາວສ່ວນຫຼາຍແມ່ນຊາວໄຮ່ນາ, ການດຳລົງຊີວິດຕິດພັນກັບທຳມະຊາດ ແລະການອອກແຮງງານ. ສະນັ້ນ, ວັນນະຄະດີພື້ນເມືອງຈິ່ງມີຄວາມສຳຄັນທີ່ສຸດແກ່ຊາວຜູ້ອອກແຮງງານໃນການດຳລົງຊີວິດ, ການຕໍ່ສູ້ຕ້ານໄພທຳມະຊາດ ແລະສັງຄົມ (ອ່ອນແກ້ວ ນວນນະວົງ ແລະຄະນະ, 2008).

ວັນນະຄະດີພື້ນເມືອງຂອງຊາດລາວເຮົາເຄີຍຕິດແໜ້ນກັບການດຳລົງຊີວິດຕົວຈິງຂອງປະຊາຊົນບັນດາເຜົ່າ, ພິເສດແມ່ນການເຮັດບຸນກິນທານ, ຮີດຄອງປະເພນີ ແລະການເຊື່ອຖືອື່ນໆ. ຮີດຄອງປະເພນີອັນເກົ່າແກ່ ແລະດີງາມເຫຼົ່ານັ້ນເຄີຍມີເນື້ອນໃນດ້ານການອອກແຮງງານເພີ່ມພູນຜະລິດຜົນທັງມີຄວາມໝາຍປຸກລະດົມທາງຈິດໃຈ ແລະເປັນເງື່ອນໄຂອັນສະດວກດີໃຫ້ແກ່ການກຳເນີດ, ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງ. ໃນດ້ານຮູບການ ສະແດງວັນນະຄະດີພື້ນເມືອງຂອງລາວເຮົາ ເຄີຍຕິດພັນກັບສິລະປະການຟ້ອນລຳ, ການເສບແບບພື້ນເມືອງທີ່ມີລັກ ສະນະ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ມວນຊົນຄື: ລຳວົງ, ລຳເລື່ອງ, ປະສານກັບສຽງຄ້ອງ, ສຽງກອງອັນຫ້າວຫັນຈັບໃຈ ພ້ອມກັບຈັງຫວະແຄນທີ່ມີບົດບາດຂຶ້ນລົງຢ່າງເຊາະໃສເຂັ້ມແຂງ, ເຮັດໃຫ້ບັນຍາກາດຟົດຟື້ນ ຄຶກຄື້ນເປັນພິເສດຕ່າງກັນກັບການສະແດງພື້ນເມືອງຂອງຊາດອື່ນໆ. ຈຸດພິເສດຂອງການສະແດງດັ່ງກ່າວມານັ້ນກໍມີສ່ວນກຳນົດລະດັບການກຳເນີດ ແລະການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວແຕ່ລະປະເພດ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

**2. ການກຳເນີດ ແລະການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ.**

**2.1 ການກຳເນີດຂອງວັນນະຄະດີພື້ນເມືອງລາວ** (15 ນາທີ)

**<u>ກິດຈະກຳ 3:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ວັນນະຄະດີພື້ນເມືອງລາວມີການກຳເນີດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ວັນນະຄະດີພື້ນເມືອງ ກຳເນີດເກີດຂຶ້ນໃນຂະບວນວິວັດແຫ່ງການຕໍ່ສູ້ຕ້ານໄພທຳມະຊາດ ແລະການຕໍ່ສູ້ທາງສັງຄົມຂອງຄົນເຮົາ ພ້ອມກັນນັ້ນກໍມີຄຸນປະໂຫຍດຮັບໃຊ້ຊຸກດັນຂະບວນການຕໍ່ສູ້. ວັນນະຄະດີພື້ເມືອງສ່ອງແສງການຕໍ່ສູ້ຕ້ານໄພທຳມະຊາດ, ຕໍ່ສູ້ທາງສັງຄົມ ແລະການດຳລົງຊີວິດຂອງຄົນເຮົາຢ່າງມີຊີວິດຊີວາ ແລະອຸດົມສົມບູນທີ່ສຸດ. ນອກຈາກນັ້ນ ຍັງສະແດງເຖິງແນວຄິດຈິດໃຈ ແລະຄວາມມຸ່ງມາດປາດຖະໜາອັນມີລັກສະນະປະຊາທິປະໄຕຂອງປະຊາຊົນຜູ້ອອກແຮງງານ, ສ່ອງແສງເຖິງການຕໍ່ສູ້ຂອງປະຊາຊົນ ຕ້ານການກົດຂີ່ຂູດຮີດຂອງຊົນຊັ້ນປົກຄອງ. ພ້ອມກັນນັ້ນວັນນະຄະດີພື້ນເມືອງກໍຍັງຮັບເອົາຜົນສະທ້ອນໃນລະດັບໃດໜຶ່ງ ຈາກລະບົບແນວຄິດຂອງຊົນຊັ້ນປົກຄອງອີກດ້ວຍ. ເມື່ອເບິ່ງດ້ານເຄົ້າການກຳເນີດແລ້ວ ວັນນະຄະດີພື້ນເມືອງ ຄົງຕົວຢູ່ດ້ວຍສາຍກ້ຽວພັນກັບສິລະປະພື້ນເມືອງ ປະເພດຕ່າງໆເຊັ່ນ ຂັບ, ລຳ, ຟ້ອນປະສານດົນຕີອັນພາໃຫ້ວັນນະຄະດີພື້ນເມືອງມີລັກສະນະພິເສດອັນໜຶ່ງອີກຄື ລັກສະນະປະສົມປະສານລະຫວ່າງວັນນະຄະດີ ແລະສິລະປະ (ກຽງແກ້ວ ນອນນະວົງ ແລະຄະນະ, 2002).

ວັນນະຄະດີພື້ນເມືອງອັນອຸດົມຮັ່ງມີທີ່ສຸດ, ມັນກຳເນີດບົນພື້ນຖານການດຳລົງຊີວິດທາງສັງຄົມຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າ. ດັ່ງນັ້ນ, ຈິ່ງມີລັກສະນະຊາ ແລະລັກສະນະທ້ອງຖິ່ນຢ່າງຈະແຈ້ງ. ວັນນະຄະດີພື້ນເມືອງຂອງບັນດາເຜົ່າໄທລາວ ສະແດງເຖິງອາດການດຳລົງຊີວິດຂອງຄົນທີ່ມີລະດັບເສດຖະກິດ ແລະສັງຄົມຂະຫຍາຍຕົວ, ຕິດພັນຢ່າງຊະນິດແໜ້ນກັບການເຄື່ອນໄຫວອອຽກງານຂອງຊາວນາ ແລະດຳລົງຊີວິດຢູ່ເຂດທົ່ງພຽງ, ລຽບຕາມແຄມແມ່ນ້ຳລຳເຊ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

**2.2 ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ** (15 ນາທີ)

**<u>ກິດຈະກຳ 4:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ວັນນະຄະດີພື້ນເມືອງລາວມີການຂະຫຍາຍຕົວແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ວັນນະຄະດີພື້ນເມືອງລາວຄົງຕົວ ແລະຂະຫຍາຍຕົວໃນໝູ່ປະຊາຊົນ ໂດຍຜ່ານຮູບການສະແດງຕ່າງໆທີ່ສອດຄ່ອງຄື ປະເພດຄຳຮ້ອຍແກ້ວໃຊ້ຮູບການເລົ່າເລື່ອງ, ປະເພດຄຳຮ້ອຍກອງໃຊ້ຮູບການຂັບລຳ (ອາດຈະມີດົນຕີ ຫຼື ບໍ່ມີດົນຕີ) ແລະບາງເທື່ອວັນນະຄະດີພື້ນເມືອງກໍໄດ້ຮັບການສະແດງບົນເວທີເຊິ່ງເຄີຍເອີ້ນກັນວ່າ "ການສະແດງພື້ນເມືອງ". ບັນດາຮູບແບບການປະດິດແຕ່ງ ແລະການສະແດງເຫຼົ່ານີ້ໄດ້ກຳນົດປະເພດຕ່າງໆຂອງວັນນະຄະດີພື້ນເມືອງຄື ວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ, ວັນະຄະດີພື້ນເມືອງປະເພດຄຳຮ້ອຍກອງ ແລະວັນນະຄະດີພື້ນເມືອງປະເພດການສະແດງພື້ນເມືອງ (ກຽງແກ້ວ ນອນນະວົງ ແລະຄະນະ, 2002).

ວັນນະຄະດີພື້ນເມືອງແມ່ນໝາກຜົນແຫ່ງການປະດິດຄິດແຕ່ງລວມໝູ່ຂອງປະຊາຊົນຕັ້ງແຕ່ດຶກດຳບັນຊຶ່ງໄດ້ຂະຫຍາຍຕົວມາດ້ວຍວິທີເລົ່າປາກຕໍ່ປາກສືບຕໍ່ກັນມາແຕ່ຮຸ່ນຄົນນັ້ນຫາຮຸ່ນຄົນນີ້. ໃນຂະບວນວິວັດແຫ່ງການອອກແຮງງານຜະລິດຜົນກໍຄືການຕໍ່ສູ້ຕ້ານ "ສັດຕູສີຕີນ ແລະສອງຕີນ" ຕັ້ງເປັນເວລາຫຼາຍຮ້ອຍຫຼາຍພັນປີ ປະຊາຊົນລາວບັນດາເຜົ່າໄດ້ພາກັນປະດິດແຕ່ງເທບນິຍາຍ, ນິທານປະເພດຕ່າງໆ, ຄຳຜະຫຍາທຸກຊະນິດ ແລະກອນຂັບລຳຫຼາຍຮູບຫຼາຍແບບຂຶ້ນ ຕັ້ງແຕ່ຄາວຕົນບໍ່ທັນມີຕົວໜັງສືພຸ້ນ, ແຕ່ຫຼັງຈາກທີ່ໄດ້ມີຕົວໜັງສືລາວຂຶ້ນມາແລ້ວວັນນະຄະດີພື້ນເມືອງລາວກໍຍັງສືບຕໍ່ຂະຫຍາຍຕົວມາຢ່າງບໍ່ຢຸດຢັ້ງຈົນເຖິງທຸກວັນນີ້ ແລະໄດ້ມີບົດບາດອັນສຳຄັນຍິ່ງຕໍ່ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີຂຽນລາວສະໄໝກ່ອນກໍຄືປັດຈຸບັນ.

ການພົວພັນສິ່ງຜົນສະທ້ອນເຊິ່ງກັນ ແລະກັນລະຫວ່າງວັນນະຄະດີພື້ນເມືອງກັບວັນນະຄະດີຂຽນ ແມ່ນຈຸດພິເສດອັນໜຶ່ງທີ່ສະແດງອອກຢ່າງຈະແຈ້ງໃນວັນນະຄະດີພື້ນເມືອງຂອງລາວເຮົາ. ການພົວພັນເຄີຍສະແດງອອກໃນສອງດ້ານກົງກັນຂ້າມ ແລະຊ່ວຍໜູນເຊິ່ງກັນ ແລະກັນຄື: ແຕ່ຮູບການປະດິດແຕ່ງພື້ນເມືອງຄ່ອຍຫັນປ່ຽນມາເປັນວັນນະຄະດີຂຽນ ແລະກົງກັນຂ້າມວັນນະຄະດີຂຽນໄດ້ຖືກນຳໄປເຜີຍແຜ່ ແລະສະແດງດ້ວຍຮູບການຂອງວັນນະຄະດີພື້ນເມືອງ. ໃນບາງກໍລະນີສາຍພົວພັນ ແລະການຫັນປ່ຽນລະຫວ່າງການປະດິດແຕ່ງວັນນະຄະດີທັງສອງປະເພດນີ້ມີຄວາມແໜ້ນແຟ້ນຈົນເຖິງຂັ້ນຍາກທີ່ຈະຄົ້ນຄວ້າຊອກຫາເຂດແດນ ແລະກົກເຄົ້າຂອງມັນຢ່າງຊັດເຈນໄດ້. ສະນັ້ນຈິ່ງອາດເວົ້າໄດ້ວ່າ ວັນນະຄະດີພື້ນເມືອງມີຖານະບົດບາດ ແລະທີ່ຕັ້ງສຳຄັນໃນພື້ນຖານວັນນະຄະດີແຫ່ງຊາດ ແລະເປັນພື້ນຖານອັນໜັກແໜ້ນໃນການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີຂຽນສະໄໝຕ່າງໆ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ
  - ຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວ
  - ການກຳເນີດຂອງວັນນະຄະດີພື້ນເມືອງລາວ
  - ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ
- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ອ່ອນແກ້ວ ນວນນະວົງ ແລະຄະນະ. (2008). ແບບຮຽນວັນນະຄະດີຊັ້ນມັດທະຍົມສຶກສາ ປີທີ ສີ່. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ກຽງແກ້ວ ນວນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1. ລະຫັດ 630LLI 322. ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ

ບໍ່ແສງຄຳ ວົງດາລາ ແລະຄະນະ. (1987). ວັນນະຄະດີລາວ. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ.

ຄູສອນປະຈຳວິຊາ



ປທ.ສົມທະເພີຍ ສີວົງສັກ